# ສຳເລັດກອງປະຊຸມໃຫຍ່ຄັ້ງທີ III ໜ່ວຍພັກກົມບໍລິການ



*ຂ່າວ-ພາບ: ລັດສະໝີ ດວງສັດຈະ

ກົມບໍລິການທະນາຄານແຫ່ງ ສປປ ລາວ (BOL) ໄດ້ດຳເນີນກອງປະຊຸມໃຫຍ່ຄັ້ງທີ III ໃນວັນທີ 15 ກຸມພາຜ່ານມາ ໂດຍການເປັນປະທານຂອງສະຫາຍ ນໍລະດີ ສີລັດຕະນະ ເລຂາໜ່ວຍພັກ-ຫົວໜ້າກົມບໍລິການ ໂດຍການເຂົ້າຮ່ວມຂອງສະຫາຍ ພູເພັດ ຄຳພູນວົງ ເລຂາຄະນະພັກ-ຜູ້ວ່າການທະນາຄານແຫ່ງ ສປປ ລາວ ນອກນັ້ນຍັງມີຄະນະພັກຮາກຖານໜ່ວຍພັກ ແລະ ສະມາຊິກພັກເຂົ້າຮ່ວມ.

ສະຫາຍເລຂາໜ່ວຍພັກໄດ້ຢືນຢັນເຖິງໝາກຜົນໃນການຊີ້ນຳ-ນຳພາໃນໄລຍະຜ່ານມາໂດຍເປັນເສນາທິການໃຫ້ຄະນະພັກໃນການປະຕິບັດ ນະໂຍບາຍຄຸມຄອງມະຫາພາກເພື່ອປະຕິບັດແຜນເງິນຕາຂອງ BOL ວາງອອກໃນແຕ່ລະໄລຍະ, ພ້ອມນີ້ກໍ່ຍັງໄດ້ນຳພາຈັດຕັ້ງປະຕິບັດວຽກງານວິຊາສະເພາະໃນດ້ານການບໍລິຫານຄັງສຳຮອງເງິນຕາຕ່າງປະເທດ, ບໍລິການສະໜອງເງິນສົດໃຫ້ທະນາຄານທຸລະກິດ ແລະ ສັງຄົມ, ໄດ້ຄົ້ນຄ້ວາສະໜອງສິນເຊື່ອໃຫ້ແກ່ໂຄງການບູລິມະສິດຂອງລັດຖະບານ, ຈຳໜ່າຍພັນທະບັດໃຫ້ແກ່

ທະນາຄານກາງ ແລະ ກະຊວງການເງິນ, ບໍລິການຮັບເປີດບັນຊີ ແລະ ໂອນເງິນໃຫ້ທະນາຄານທຸລະກິດ, ສະຖາບັນການເງິນ, ງົບປະມານບັນດາກະຊວງ ແລະ ໂຄງການຕ່າງໆຢ່າງທັນການ.

ນອກຈາກໜ້າທີ່ວິຊາສະເພາະແລ້ວ ໜ່ວຍພັກຍັງໄດ້ຊີ້ນໍາ-ນໍາພາອົງການຈັດຕັ້ງມະຫາຊົນ, ວຽກງານປ້ອງກັນຄວາມສະຫງົບ, ໃນດ້ານວຽກງານປັບປຸງ ແລະ ຂະຫຍາຍພັກກໍ່ໄດ້ຮັບການປັບປຸງທາງດ້ານການເມືອງແນວຄິດ ແລະ ການຈັດຕັ້ງໃຫ້ມີຄວາມປອດໃສ, ໜັກແໜ້ນ ແລະ ເຂັ້ມແຂງເປັນກ້າວໆ, ໃນສົກ 2007-2008 ໜ່ວຍພັກໄດ້ຮັບນາມມະຍົດເປັນໜ່ວຍພັກເຂັ້ມແຂງ-ຮູ້ນໍາພາຮອບດ້ານ ແລະ ໃນສົກຜ່ານມາກໍ່ໄດ້ສະເໜີໃຫ້ຄະນະພັກຂັ້ນເທິງຄົ້ນຄ້ວາ ແລະ ຮັບຮອງເປັນໜ່ວຍພັກເຂັ້ມແຂງ-ຮູ້ນໍາພາຮອບດ້ານໃນຂັ້ນຕໍ່ໄປ.

ຈາກນັ້ນ, ກອງປະຊຸມກໍ່ໄດ້ປ່ອນບັດຄັດເລືອກເອົາຄະນະໜ່ວຍພັກຊຸດໃໝ່ເຊິ່ງສະຫາຍ ນໍລະດີ ສີລັດຕະນະ ໄດ້ຖືກເລືອກຕັ້ງເປັນເລຂາໜ່ວຍພັກອີກເທື່ອໃໝ່, ກອງປະຊຸມຍັງໄດ້ຄັດເລືອກເອົາຜູ້ແທນເຂົ້າຮ່ວມກອງປະຊຸມໃຫຍ່ຄັ້ງທີ II ຂອງອົງຄະນະພັກ BOL, ໃນໂອກາດດັ່ງກ່າວສະຫາຍເລຂາຄະນະພັກ BOL ກໍ່ໄດ້ຍ້ອງຍໍສັນລະເສີນຕໍ່ຜົນງານທີ່ໜ່ວຍພັກກົມບໍລິການຍາດມາໄດ້ໃນໄລຍະຜ່ານມາ ແລະ ພ້ອມກັນນັ້ນກໍ່ໄດ້ໃຫ້ທິດຊີ້ນໍາຕໍ່ກອງປະຊຸມໃນຫຼາຍບັນຫາໂດຍສະເພາະຈົ່ງສືບຕໍ່ເສີມຂະຫຍາຍຜົນງານທີ່ດີເດັ່ນ ແລະ ແກ້ໄຂຂໍ້ຄົງຄ້າງ, ສືບຕໍ່ເພີ່ມທະວີການສ້າງ ແລະ ການຮັກສານາມມະຍົດໜ່ວຍພັກເຂັ້ມແຂງ-ຮູ້ນໍາພາຮອບດ້ານ ແລະ ກໍ່ພ້ອມກັນສືບຕໍ່ເພີ່ມທະວີໃນການຊີ້ນໍາ-ນໍາພາ ແລະ ຈັດຕັ້ງປະຕິບັດພາລະບົດບາດການເປັນທະນາຄານຂອງທະນາຄານຂອງໜ່ວຍພັກກົມບໍລິການໃຫ້ມີປະສິດທິຜົນສູງຂຶ້ນຢ່າງບໍ່ຢຸດຢັ້ງ.